ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ.149/ນຍ

ນະຄອນຫຼວງວຽງຈັນ, ວັນທີ..19..ພຶດສະພາ 2011

# ດຳລັດ

## ວ່າດ້ວຍມູນນິທິ

- ອີງຕາມລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບລົງວັນທີ 06 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມໜັງສືສະເໜີຂອງທ່ານລັດຖະມົນຕີປະຈຳ ສນຍ, ຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 46/ທປຄ, ລົງວັນທີ 16 ພຶດສະພາ 2011.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດຳລັດ:

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ ແລະ ລະບຽບການຕ່າງໆ ກ່ຽວກັບການສ້າງຕັ້ງ, ການເຄື່ອນໄຫວ ແລະ ການຄຸ້ມຄອງ ມູນນິທິທີ່ມີຖານະນິຕິບຸກຄົນຢູ່ ສປປ ລາວ ເພື່ອອຳນວຍຄວາມສະດວກ ແລະ ຊຸກຍູ້ສົ່ງເສີມການເຄື່ອນໄຫວຂອງມູນນິທິ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແນໃສ່ສົ່ງເສີມສິດເສລີພາບ, ຫົວຄິດປະດິດສ້າງ ແລະ ສິດເປັນເຈົ້າຂອງພົນລະເມືອງລາວ ເຂົ້າໃນການຈັດຕັ້ງມູນນິທິ, ປະກອບສ່ວນເຂົ້າໃນການຊ່ວຍເຫຼືອສັງຄົມ ແລະ ລຶບລ້າງຄວາມທຸກຍາກຂອງປະຊາຊົນ.

**ມາດຕາ 2. ມູນນິທິ**

ມູນນິທິ ແມ່ນການຈັດຕັ້ງສັງຄົມ ທີ່ມີຖານະນິຕິບຸກຄົນ, ມີທຶນ, ຊັບສິນສະເພາະ ເພື່ອສາທາລະນະປະໂຫຍດ ດ້ານວັດທະນະທຳ, ການສຶກສາ, ສິ່ງແວດລ້ອມ, ສາທາລະນະສຸກ, ກິລາກາຍະກຳ, ວິທະຍາສາດ, ການກຸສົນ, ມະນຸດສະທຳ ແລະ ອື່ນໆ ໂດຍບໍ່ຫວັງຜົນກຳໄລ.

**ມາດຕາ 3. ການອະທິບາຍຄຳສັບ**

**ຄຳສັບຕ່າງໆ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:**

1. **ມູນນິທິທີ່ມີຖານະນິຕິບຸກຄົນ** ໝາຍເຖິງ ມູນນິທິທີ່ໄດ້ຮັບການສ້າງຕັ້ງຂຶ້ນ ຕາມດຳລັດສະບັບນີ້, ເຄື່ອນໄຫວເປັນປະຈຳ, ມີທຶນ, ມີຊັບສິນ, ມີກົດລະບຽບ, ມີສຳນັກງານ, ມີຕາປະທັບ ແລະ ມີບັນຊີເງິນຝາກຢູ່ ທະນາຄານຢ່າງຖືກຕ້ອງຕາມລະບຽບກົດໝາຍ;
2. **ບໍ່ຫວັງຜົນກຳໄລ** ໝາຍເຖິງ ທຶນ, ຊັບສິນ, ລາຍຮັບ ທີ່ໄດ້ມາຈາກການເຄື່ອນໄຫວຂອງມູນນິທິ ພາຍຫຼັງຫັກຄ່າໃຊ້ຈ່າຍບໍລິຫານອອກແລ້ວ ສ່ວນທີ່ເຫຼືອບໍ່ໄດ້ນຳມາແບ່ງປັນກັນ, ບໍ່ສວຍໃຊ້ເພື່ອຜົນປະໂຫຍດສ່ວນຕົວ ແຕ່ນຳໃຊ້ຕາມຈຸດປະສົງທີ່ໄດ້ກຳນົດໃນກົດລະບຽບຂອງມູນນິທິ;
3. **ທຶນ** ໝາຍເຖິງ ເງິນ;
4. **ຊັບສິນ** ໝາຍເຖິງ ຕຶກ, ອາຄານ, ທີ່ດິນ, ພາຫະນະ, ອຸປະກອນຮັບໃຊ້ ແລະ ວັດຖຸອື່ນໆ ທີ່ໄດ້ມາຈາກການຊື້, ການເຊົ່າ, ການບໍລິຈາກ ແລະ ການປະກອບສ່ວນ ຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ຫຼື ລັດມອບໃຫ້;
5. **ການບໍລິຈາກທຶນ, ຊັບສິນ** ໝາຍເຖິງ ການເສຍສະຫຼະ, ການມອບໂອນທຶນ, ຊັບສິນຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ຖືກຕ້ອງຕາມລະບຽບກົດໝາຍ ໃຫ້ແກ່ມູນນິທິ;
6. **ການລະດົມທຶນ, ຊັບສິນ** ໃນມາດຕາ 37 ໝາຍເຖິງ ການຈັດເວທີ, ກອງປະຊຸມ ຫຼື ງານຕ່າງໆ ສະເພາະ ເພື່ອຮຽກຮ້ອງໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ໃຫ້ມາບໍລິຈາກ, ສະໜັບສະໜູນ ທຶນ, ຊັບສິນແກ່ມູນນິທິ;
7. **ອົງການກວດສອບເອກະລາດ** ໝາຍເຖິງ ອົງການກວດສອບພາຍນອກ ທີ່ດຳເນີນໂດຍວິສາຫະກິດກວດສອບ ຫຼື ນັກກວດສອບອິດສະຫຼະ ທີ່ໄດ້ຈົດທະບຽນດຳເນີນການກວດສອບເອກະລາດ ແລະ ຂຶ້ນທະບຽນວິສາຫະກິດຢ່າງຖືກຕ້ອງຕາມກົດໝາຍ.

**ມາດຕາ 4. ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບມູນນິທິທີ່ມີຖານະນິຕິບຸກຄົນຂອງສັງຄົມເທົ່ານັ້ນ.

ດຳລັດສະບັບນີ້ ບໍ່ມີຜົນບັງຄັບໃຊ້ສຳລັບບັນດາອົງການຈັດຕັ້ງ ດັ່ງນີ້:

- ກອງທຶນຂອງລັດ ແລະ ເອກະຊົນ;
- ມູນນິທິ ຂອງຄົນຕ່າງດ້າວ, ຄົນບໍ່ມີສັນຊາດ;
- ມູນນິທິ ຂອງຄົນຕ່າງປະເທດ;
- ສາຂາ ຫຼື ຫ້ອງການຜູ້ຕາງໜ້າມູນນິທິຂອງຕ່າງປະເທດປະຈຳລາວ.

**ມາດຕາ 5. ຫຼັກການສ້າງຕັ້ງ ແລະ ເຄື່ອນໄຫວ ຂອງມູນນິທິ**

ມູນນິທິ ສ້າງຕັ້ງຂຶ້ນ ແລະ ເຄື່ອນໄຫວ ຕາມຫຼັກການພື້ນຖານ ດັ່ງນີ້:

1. ຕົນຕົວສະໝັກໃຈປະກອບທຶນ, ຊັບສິນ ເພື່ອສ້າງຕັ້ງມູນນິທິ;
2. ເຄື່ອນໄຫວບໍ່ຫວັງຜົນກຳໄລ, ເປັນປະຈຳ ແລະ ກຸ້ມຕົນເອງທາງດ້ານການເງິນ;
3. ໂປ່ງໃສ, ເປີດເຜີຍ, ມີປະຊາທິປະໄຕ ແລະ ມີຄວາມສະເໝີພາບ;
4. ຮັບຜິດຊອບດ້ວຍຕົນເອງຕໍ່ໜ້າກົດໝາຍ ທຸກການເຄື່ອນໄຫວຂອງມູນນິທິ.

**ມາດຕາ 6. ນະໂຍບາຍຂອງລັດ ຕໍ່ ມູນນິທິ**

ລັດ ມີນະໂຍບາຍຕໍ່ມູນນິທິ ດັ່ງນີ້:

1. ຮັບປະກັນສິດເສລີພາບຂອງພົນລະເມືອງລາວ ໃນການສ້າງຕັ້ງມູນນິທິ ທີ່ບໍ່ຂັດກັບລະບຽບກົດໝາຍ;
2. ສ້າງເງື່ອນໄຂໃຫ້ມູນນິທິເຄື່ອນໄຫວ ເພື່ອສາທາລະນະປະໂຫຍດ ດ້ານວັດທະນະທຳ, ການສຶກສາ, ສິ່ງແວດລ້ອມ, ສາທາລະນະສຸກ, ກິລາກາຍະກຳ, ວິທະຍາສາດ, ການກຸສົນ, ມະນຸດສະທຳ ຫຼື ເພື່ອສາທາລະນະປະໂຫຍດອື່ນໆ;
3. ມອບໂອນວຽກງານການບໍລິການສາທາລະນະໃຫ້ມູນນິທິນັບມື້ຫຼາຍຂຶ້ນ ທັງມີມາດຕະການອັນເໝາະສົມ ເພື່ອຊຸກຍູ້, ສົ່ງເສີມໃຫ້ມູນນິທິ ເຮັດການບໍລິການສາທາລະນະ, ຊ່ວຍເຫຼືອສັງຄົມ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ;
4. ອະນຸຍາດໃຫ້ຈັດການລະດົມ, ຂົນຂວາຍທຶນ, ຊັບສິນ ເຂົ້າມູນນິທິ;
5. ອະນຸຍາດໃຫ້ຮັບເອົາການບໍລິຈາກທຶນ, ຊັບສິນຕ່າງໆ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ບົນພື້ນຖານລະບຽບກົດໝາຍ;
6. ຫຼຸດຜ່ອນ ຫຼື ຍົກເວັ້ນພາສີ, ອາກອນ, ຄ່າທຳນຽມຕ່າງໆໃຫ້ແກ່ມູນນິທິ ຕາມໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 7. ເງື່ອນໄຂໃນການສ້າງຕັ້ງມູນນິທິ**

ມູນນິທິໃດໜຶ່ງໄດ້ຮັບການສ້າງຕັ້ງຂຶ້ນ ເມື່ອມີຄົບເງື່ອນໄຂ ດັ່ງນີ້:

1. ມີຈຸດປະສົງ ເພື່ອສາທາລະນະປະໂຫຍດ, ການເຄື່ອນໄຫວ ບໍ່ຂັດກັບລັດຖະທຳມະນູນ, ລະບຽບກົດໝາຍ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ຂອງທ້ອງຖິ່ນ ແລະ ຂອງເຜົ່າຕ່າງໆ; ບໍ່ເປັນໄພອັນຕະລາຍຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ສິດເສລີພາບຂອງບຸກຄົນອື່ນ ແລະ ບໍ່ຫວັງຜົນກຳໄລ;
2. ມີຫຼັກຖານຢັ້ງຢືນຢ່າງຖືກຕ້ອງກ່ຽວກັບ ທຶນ, ຊັບສິນ ເພື່ອສ້າງຕັ້ງມູນນິທິ;
3. ຜູ້ລິເລີ່ມກໍ່ຕັ້ງມູນນິທິ ຕ້ອງເປັນພົນລະເມືອງລາວ, ມີອາຍຸແຕ່ ສິບແປດປີ ຂຶ້ນໄປ ແລະ ບໍ່ເປັນບ້າເສຍຈິດ. ສຳລັບຄົນຕ່າງດ້າວ, ຄົນຕ່າງປະເທດ ສາມາດປະກອບທຶນ, ຊັບສິນ ເພື່ອສ້າງຕັ້ງມູນນິທິ ຮ່ວມກັບການຈັດຕັ້ງ ຫຼື ພົນລະເມືອງລາວ;
4. ຊື່ຂອງມູນນິທິ ບໍ່ຊ້ຳຊ້ອນກັບຊື່ຂອງມູນນິທິອື່ນ ທີ່ໄດ້ຮັບອະນຸຍາດໃຫ້ສ້າງຕັ້ງຂຶ້ນຢ່າງຖືກຕ້ອງກ່ອນແລ້ວ ໃນທ້ອງຖິ່ນດຽວກັນ;
5. ໄດ້ຮັບການອະນຸຍາດສ້າງຕັ້ງຈາກອົງການຈັດຕັ້ງຂອງລັດ ຕາມດຳລັດສະບັບນີ້;
6. ມີກົດລະບຽບ, ມີເອກະສານຢັ້ງຢືນຖືກຕ້ອງກ່ຽວກັບສຳນັກງານຂອງມູນນິທິ.

## ໝວດທີ II
## ລະດັບມູນນິທິ

**ມາດຕາ 8. ລະດັບມູນນິທິ**

ມູນນິທິ ຖືກຈັດແບ່ງອອກເປັນ ສາມ ລະດັບ ດັ່ງນີ້:

1. ມູນນິທິເຄື່ອນໄຫວໃນຂອບເຂດທົ່ວປະເທດ;
2. ມູນນິທິເຄື່ອນໄຫວໃນຂອບເຂດພາຍໃນແຂວງ ຫຼື ນະຄອນ;
3. ມູນນິທິເຄື່ອນໄຫວໃນຂອບເຂດພາຍໃນເມືອງ ຫຼື ເທດສະບານ.

**ມາດຕາ 9. ມູນນິທິເຄື່ອນໄຫວໃນຂອບເຂດທົ່ວປະເທດ**

ມູນນິທິເຄື່ອນໄຫວໃນຂອບເຂດທົ່ວປະເທດ ແມ່ນມູນນິທິ ທີ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ເຄື່ອນໄຫວຢ່າງກວ້າງຂວາງ ໃນຂອບເຂດທົ່ວປະເທດ ຫຼື ພາກໃດໜຶ່ງຂອງປະເທດ ທີ່ກວມເອົາຫຼາຍແຂວງ, ນະຄອນ.

**ມາດຕາ 10. ມູນນິທິເຄື່ອນໄຫວໃນຂອບເຂດພາຍໃນແຂວງ ຫຼື ນະຄອນ**

ມູນນິທິເຄື່ອນໄຫວໃນຂອບເຂດພາຍໃນແຂວງ ຫຼື ນະຄອນ ແມ່ນມູນນິທິທີ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ເຄື່ອນໄຫວສະເພາະໃນຂອບເຂດພາຍໃນແຂວງ ຫຼື ນະຄອນໃດໜຶ່ງ.

**ມາດຕາ 11. ມູນນິທິເຄື່ອນໄຫວໃນຂອບເຂດພາຍໃນເມືອງ ຫຼື ເທດສະບານ**

ມູນນິທິເຄື່ອນໄຫວໃນຂອບເຂດພາຍໃນເມືອງ ຫຼື ເທດສະບານ ແມ່ນມູນນິທິທີ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ເຄື່ອນໄຫວສະເພາະຢູ່ແຕ່ໃນຂອບເຂດພາຍໃນເມືອງ ຫຼື ເທດສະບານໃດໜຶ່ງເທົ່ານັ້ນ.

## ໝວດທີ III
## ລະບຽບການ ແລະ ຂັ້ນຕອນການສ້າງຕັ້ງມູນນິທິ

**ມາດຕາ 12. ລະບຽບ ແລະ ຂັ້ນຕອນການສະເໜີສ້າງຕັ້ງມູນນິທິ**

ການສ້າງຕັ້ງມູນນິທິ ໃຫ້ປະຕິບັດຕາມລະບຽບການ ແລະ ຂັ້ນຕອນ ດັ່ງນີ້:

1. ຜູ້ລິເລີ່ມກໍ່ຕັ້ງ ຫຼື ຄະນະຜູ້ລິເລີ່ມກໍ່ຕັ້ງມູນນິທິ ປະກອບສຳນວນເອກະສານໃຫ້ຖືກຕ້ອງ ແລະ ຄົບຖ້ວນຕາມທີ່ກຳນົດຢູ່ໃນມາດຕາ **13** ຂອງດຳລັດສະບັບນີ້ ແລ້ວຍື່ນຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນ ຫຼື ຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ເພື່ອອະນຸມັດບົນພື້ນຖານຄຳເຫັນ ຂອງກະຊວງ ຫຼື ຂະແໜງການທີ່ກ່ຽວຂ້ອງ;
2. ພາຍໃນ ຫົກສິບວັນ ນັບແຕ່ວັນໄດ້ຮັບສຳນວນເອກະສານສະເໜີຂໍສ້າງຕັ້ງມູນນິທິ ອົງການທີ່ມີສິດອະນຸມັດສ້າງຕັ້ງ ຕ້ອງອອກຂໍ້ຕົກລົງຮັບຮອງເອົາກົດລະບຽບ ຫຼື ປະຕິເສດການສ້າງຕັ້ງມູນນິທິ;
3. ມູນນິທິ ຈະໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນທາງການ ເມື່ອອົງການທີ່ມີສິດອະນຸມັດສ້າງຕັ້ງ ຕາມທີ່ກຳນົດຢູ່ໃນມາດຕາ **38 ຂໍ້ 1** ແລະ **38 ຂໍ້ 4** ຂອງດຳລັດສະບັບນີ້ ໄດ້ອອກຂໍ້ຕົກລົງຮັບຮອງເອົາກົດລະບຽບ ເປັນຕົ້ນໄປ.

**ມາດຕາ 13. ການປະກອບເອກະສານ ຂໍອະນຸມັດສ້າງຕັ້ງມູນນິທິ**

ຜູ້ລິເລີ່ມກໍ່ຕັ້ງ ຫຼື ຄະນະຜູ້ລິເລີ່ມກໍ່ຕັ້ງມູນນິທິ ປະກອບເອກະສານໃຫ້ຄົບຖ້ວນ ດັ່ງນີ້:

1. ໃບຄໍາຮ້ອງຂໍອະນຸຍາດສ້າງຕັ້ງມູນນິທິ;
2. ຮ່າງກົດລະບຽບຂອງມູນນິທິ;
3. ຊີວະປະຫວັດຫຍໍ້, ໃບຢັ້ງຢືນທີ່ຢູ່, ໃບແຈ້ງໂທດ ຂອງຜູ້ລິເລີ່ມກໍ່ຕັ້ງ ຫຼື ຂອງສະມາຊິກຄະນະຜູ້ລິເລີ່ມກໍ່ຕັ້ງມູນນິທິ ຫຼື ຊື່, ທີ່ຢູ່ຂອງການຈັດຕັ້ງທີ່ເຫັນດີປະກອບສ່ວນສ້າງຕັ້ງມູນນິທິ;
4. ບົດສະເໜີ ເພື່ອອະທິບາຍເຫດຜົນ ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງມູນນິທິ;
5. ເອກະສານຢັ້ງຢືນຄໍາໝັ້ນສັນຍາ ການບໍລິຈາກ ຫຼື ການປະກອບສ່ວນທຶນ, ຊັບສິນ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອສ້າງຕັ້ງມູນນິທິ;
6. ເອກະສານຢັ້ງຢືນກ່ຽວກັບມູນນິທິ ທີ່ໄດ້ຮັບການສ້າງຕັ້ງຂຶ້ນຕາມພິໄນກຳ ຫຼື ຕາມສັນຍາມອບສັນທະ (ການມອບສິດ) ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
7. ເອກະສານຢັ້ງຢືນສໍານັກງານ ຂອງມູນນິທິ.

**ມາດຕາ 14. ຊື່, ສໍານັກງານ, ສັນຍາລັກ ແລະ ຕາປະທັບ ຂອງມູນນິທິ**

**1. ຊື່**

– ຊື່ຂອງມູນນິທິ ໃຫ້ເປັນພາສາລາວ, ຈະແຈ້ງ, ເຂົ້າໃຈງ່າຍ, ບໍ່ມີລັກສະນະຫຍາບຄາຍ ແລະ ຖ້າມີຄວາມຈໍາເປັນແປເປັນພາສາຕ່າງປະເທດກໍໄດ້ ແຕ່ຕ້ອງເປັນພາສາລາວກ່ອນ ແລ້ວຈຶ່ງແປເປັນພາສາຕ່າງປະເທດ.

– ການໃຊ້ຊື່ ຫຼື ນາມສະກຸນຂອງບຸກຄົນໃດໜຶ່ງ ເປັນຊື່ ຫຼື ປະກອບເປັນຊື່ ຂອງມູນນິທິ ຕ້ອງໄດ້ຮັບອະນຸຍາດເປັນລາຍລັກອັກສອນ ຈາກເຈົ້າຂອງຊື່ ຫຼື ນາມສະກຸນນັ້ນເສຍກ່ອນ.

– ການໃຊ້ຊື່ ຂອງອົງການຈັດຕັ້ງລັດ, ລັດວິສາຫະກິດ ຫຼື ນິຕິບຸກຄົນໃດໜຶ່ງ ເປັນຊື່ ຫຼື ປະກອບເປັນຊື່ຂອງມູນນິທິ ຕ້ອງໄດ້ຮັບອະນຸຍາດເປັນລາຍລັກອັກສອນ ຈາກຫົວໜ້າການຈັດຕັ້ງນັ້ນເສຍກ່ອນ.

**2. ສໍານັກງານ**

ສໍານັກງານຂອງມູນນິທິ ຕ້ອງມີທີ່ຕັ້ງຢູ່ ສປປ ລາວ ແລະ ມີໜັງສືຢັ້ງຢືນກໍາມະສິດ ຫຼື ສັນຍາເຊົ່າ ທີ່ຖືກຕ້ອງຕາມກົດໝາຍ.

**3. ສັນຍາລັກ**

ໃຫ້ມູນນິທິມີກາໝາຍສັນຍາລັກສະເພາະຂອງຕົນ.

**4. ຕາປະທັບ**

ມູນນິທິ ມີຕາປະທັບເປັນຂອງຕົນເອງ ໂດຍແມ່ນອົງການຈັດຕັ້ງຂອງລັດ ເປັນຜູ້ອະນຸມັດຕາມຂະໜາດ ແລະ ຮູບແບບທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 15. ກົດລະບຽບ ຂອງມູນນິທິ**

ກົດລະບຽບ ຂອງມູນນິທິ ມີເນື້ອໃນ ດັ່ງນີ້:

1. ຊື່ຂອງມູນນິທິ;

2. ສຳນັກງານບ່ອນເຮັດວຽກ;
3. ສັນຍາລັກ (ຖ້າມີ);
4. ຈຸດປະສົງ, ຂອບເຂດ ແລະ ຂົງເຂດວຽກງານ ທີ່ມູນນິທິຈະເຄື່ອນໄຫວ;
5. ຫຼັກການກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງມູນນິທິ;
6. ໂຄງປະກອບການຈັດຕັ້ງ ຂອງມູນນິທິ;
7. ສິດ ແລະ ໜ້າທີ່ ຂອງແຕ່ລະຕຳແໜ່ງໃນໂຄງປະກອບບຸກຄະລາກອນ ຂອງມູນນິທິ;
8. ການຈັດຕັ້ງ, ວິທີການເລືອກຕັ້ງ ຫຼື ຜູ້ມີສິດແຕ່ງຕັ້ງ ແລະ ປົດຕຳແໜ່ງ ສະມາຊິກຄະນະບໍລິຫານງານ, ປະທານ, ຮອງປະທານ, ຜູ້ອຳນວຍການ, ຄະນະກວດກາ ແລະ ເລຂາທິການມູນນິທິ;
9. ການເງິນ ແລະ ຊັບສິນ ຂອງມູນນິທິ;
10. ລະບຽບການ ແລະ ຂັ້ນຕອນການໂຮມ, ການແຍກ ແລະ ການຍຸບເລີກ ມູນນິທິ;
11. ການຍ້ອງຍໍ ແລະ ການປະຕິບັດວິໄນ;
12. ລະບຽບການ ແລະ ຂັ້ນຕອນການປັບປຸງ, ດັດແປງ ແລະ ເພີ່ມເຕີມກົດລະບຽບຂອງມູນນິທິ;
13. ການຮ້ອງທຸກ ແລະ ລະບຽບການແກ້ໄຂຄຳຮ້ອງທຸກ;
14. ຜົນສັກສິດຂອງກົດລະບຽບມູນນິທິ.

## ໝວດທີ IV
## ທີ່ຕັ້ງ, ພາລະບົດບາດ, ສິດ, ໜ້າທີ່, ພັນທະ ແລະ ຂໍ້ຫ້າມ ຂອງມູນນິທິ

### ມາດຕາ 16. ທີ່ຕັ້ງ ແລະ ພາລະບົດບາດ

ມູນນິທິ ແມ່ນອົງການຈັດຕັ້ງສັງຄົມ, ມີພາລະບົດບາດຊ່ວຍເຫຼືອສັງຄົມ, ປະກອບສ່ວນສ້າງສາ, ພັດທະນາປະເທດ ແລະ ລຶບລ້າງຄວາມທຸກຍາກ.

### ມາດຕາ 17. ສິດ ແລະ ໜ້າທີ່ ຂອງ ມູນນິທິ

ມູນນິທິ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຄື່ອນໄຫວ ຕາມກົດລະບຽບຂອງຕົນ ແລະ ລະບຽບກົດໝາຍຂອງລັດ;
2. ໂຄສະນາເຜີຍແຜ່ ໃຫ້ກວ້າງຂວາງ, ທົ່ວເຖິງໃນສັງຄົມ ກ່ຽວກັບຈຸດປະສົງຂອງຕົນ;
3. ລະດົມທຶນ, ຊັບສິນຈາກບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
4. ຮັບເອົາການສະໜັບສະໜູນ, ຊ່ວຍເຫຼືອ, ການບໍລິຈາກທຶນ, ຊັບສິນ ຈາກບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ;
5. ໃຫ້ການສະໜັບສະໜູນ ດ້ານວັດທະນະທຳ, ການສຶກສາ, ສິ່ງແວດລ້ອມ, ສາທາລະນະສຸກ, ກິລາກາຍະກຳ, ວິທະຍາສາດ, ການກຸສົນ, ມະນຸດສະທຳ ຫຼື ສາທາລະນະປະໂຫຍດອື່ນໆ ຕາມກົດລະບຽບຂອງຕົນ;
6. ພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ພາຍໃຕ້ລະບຽບກົດໝາຍ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນ ທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງມູນນິທິ ແລະ ລະບຽບກົດໝາຍ.

**ມາດຕາ 18. ພັນທະ ຂອງມູນນິທິ**

ມູນນິທິ ມີພັນທະ ດັ່ງນີ້:

1. ລາຍງານປະຈຳປີ ໃຫ້ອົງການທີ່ມີສິດອະນຸມັດສ້າງຕັ້ງ ແລະ ອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງ ກ່ຽວກັບສະພາບການຈັດຕັ້ງ, ການເຄື່ອນໄຫວວຽກງານ, ລາຍຮັບ-ລາຍຈ່າຍ ງົບປະມານ ຂອງມູນນິທິ;
2. ເຄື່ອນໄຫວໃນຂົງເຂດ, ຂະແໜງການໃດ ຕ້ອງຢູ່ໃຕ້ການຄຸ້ມຄອງລັດ ກ່ຽວກັບຂົງເຂດ, ຂະແໜງການນັ້ນ;
3. ລະດົມ ທຶນ, ຊັບສິນຂອງມູນນິທິ ຫຼື ຮັບເອົາການບໍລິຈາກ, ການຊ່ວຍເຫຼືອຈາກບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ໃຫ້ສອດຄ່ອງກັບຈຸດປະສົງຂອງມູນນິທິ ແລະ ບົນພື້ນຖານລະບຽບກົດໝາຍ;
4. ນຳໃຊ້ ທຶນ, ຊັບສິນທັງໝົດທີ່ມູນນິທິລະດົມມາໄດ້ ໃຫ້ຖືກຕ້ອງຕາມຈຸດປະສົງ, ເປົ້າໝາຍ ຂອງມູນນິທິ ຫຼື ຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ໄດ້ມອບສັນທະໃຫ້ ຫຼື ຕາມພິໄນກຳ;
5. ປະຕິບັດຕາມລະບຽບກົດໝາຍກ່ຽວກັບການບັນຊີ, ການກວດສອບ ແລະ ກົດລະບຽບຂອງມູນນິທິ ຢ່າງເຂັ້ມງວດ;
6. ປະຕິບັດພັນທະອື່ນໆ ທີ່ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 19. ຂໍ້ຫ້າມສຳລັບ ມູນນິທິ**

ຫ້າມມູນນິທິ ປະພຶດ ດັ່ງນີ້:

1. ສວຍໃຊ້ສິດເສລີພາບໃນການສ້າງຕັ້ງມູນນິທິ ຫຼື ໃນນາມມູນນິທິ ເພື່ອເຄື່ອນໄຫວຂັດກັບລັດຖະທຳມະນູນ ແລະ ລະບຽບກົດໝາຍ;
2. ເຄື່ອນໄຫວທີ່ຈະເປັນອັນຕະລາຍ ຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ສິດເສລີພາບຂອງບຸກຄົນອື່ນ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ທ້ອງຖິ່ນ ແລະ ເຜົ່າຕ່າງໆ;
3. ເຄື່ອນໄຫວທີ່ນຳໄປສູ່ການແບ່ງແຍກຄວາມສາມັກຄີພາຍໃນຊາດ, ພາຍໃນທ້ອງຖິ່ນ ແລະ ເຜົ່າຕ່າງໆ;
4. ທຳລາຍຜົນປະໂຫຍດຂອງຊາດ, ຂອງລວມໝູ່ ແລະ ບຸກຄົນ;
5. ປອມແປງ, ມອບໂອນ, ໃຫ້ເຊົ່າ, ໃຫ້ຢືມໃບອະນຸຍາດສ້າງຕັ້ງມູນນິທິດ້ວຍຮູບການໃດກໍຕາມ;
6. ສະໜັບສະໜູນການກໍ່ຄວາມບໍ່ສະຫງົບ ແລະ ການເຄື່ອນໄຫວອື່ນໆ ທີ່ຂັດກັບລະບຽບກົດໝາຍ.

## ໝວດທີ V
## ການຈັດຕັ້ງ ຂອງມູນນິທິ

**ມາດຕາ 20. ໂຄງປະກອບບຸກຄະລາກອນ**

ໂຄງປະກອບບຸກຄະລາກອນ ຂອງມູນນິທິ ປະກອບດ້ວຍ:

- ຄະນະບໍລິຫານງານ ຫຼື ສະພາບໍລິຫານ (ເອີ້ນລວມວ່າ ຄະນະບໍລິຫານງານ);

– ປະທານຄະນະບໍລິຫານງານ ຫຼື ປະທານສະພາບໍລິຫານ (ເອີ້ນລວມວ່າ ປະທານຄະນະບໍລິຫານງານ);
– ຜູ້ອໍານວຍການ;
– ຄະນະກວດກາ;
– ເລຂາທິການ (ຖ້າຈໍາເປັນ);
– ແລະ ບຸກຄະລາກອນຕໍາແໜ່ງອື່ນໆ ທີ່ກໍານົດຢູ່ໃນກົດລະບຽບຂອງມູນນິທິ.

**ມາດຕາ 21. ພາລະບົດບາດ ຂອງ ຄະນະບໍລິຫານງານ**

ຄະນະບໍລິຫານງານມູນນິທິ ແມ່ນຄະນະໜຶ່ງ ຊຶ່ງປະກອບດ້ວຍ ສາມຄົນ ຂຶ້ນໄປ ໂດຍການສະເໜີຂອງຜູ້ລິເລີ່ມກໍ່ຕັ້ງມູນນິທິ, ມີພາລະບົດບາດຊີ້ນໍາ ນໍາພາທຸກການເຄື່ອນໄຫວ ແລະ ຕົກລົງບັນຫາສໍາຄັນຂອງມູນນິທິ.

**ມາດຕາ 22. ສິດ ແລະ ໜ້າທີ່ ຂອງ ຄະນະບໍລິຫານງານ**

ຄະນະບໍລິຫານງານມູນນິທິ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຕົກລົງມາດຕະການທີ່ຈໍາເປັນ ເພື່ອປະຕິບັດຈຸດປະສົງຂອງມູນນິທິ;
2. ພິຈາລະນາຕົກລົງ ແຜນການເຄື່ອນໄຫວ, ແຜນງົບປະມານປະຈໍາປີຂອງມູນນິທິ ແລະ ກໍານົດກ່ຽວກັບ ລາຍຮັບ ແລະ ລາຍຈ່າຍຕ່າງໆ ຂອງມູນນິທິ;
3. ພິຈາລະນາຕົກລົງ ກ່ຽວກັບໂຄງປະກອບການຈັດຕັ້ງ, ການແຕ່ງຕັ້ງ ຫຼື ປົດຕໍາແໜ່ງປະທານ, ຮອງປະທານ, ຜູ້ອໍານວຍການ, ຮອງຜູ້ອໍານວຍການ, ຄະນະກວດກາ, ກໍາມະການຄະນະປະຈໍາ (ຖ້າມີ), ເລຂາທິການ, ຫົວໜ່ວຍການຈັດຕັ້ງວິຊາການຕ່າງໆ ທີ່ຂຶ້ນກັບມູນນິທິ;
4. ອໍານວຍ, ຄວບຄຸມການເຄື່ອນໄຫວຂອງການຈັດຕັ້ງຕ່າງໆ ທີ່ຂຶ້ນກັບມູນນິທິ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກໍານົດໄວ້ໃນກົດລະບຽບຂອງມູນນິທິ.

**ມາດຕາ 23. ພາລະບົດບາດ ຂອງ ປະທານຄະນະບໍລິຫານງານ**

ປະທານຄະນະບໍລິຫານງານ ແມ່ນພົນລະເມືອງລາວ ຊຶ່ງຖືກເລືອກຕັ້ງຈາກຄະນະບໍລິຫານງານ.

ປະທານຄະນະບໍລິຫານງານ ມີພາລະບົດບາດຊີ້ນໍາການຈັດຕັ້ງປະຕິບັດມະຕິຕ່າງໆ ຂອງຄະນະບໍລິຫານງານ ແລະ ເປັນປະທານກອງປະຊຸມ ຂອງມູນນິທິ.

**ມາດຕາ 24. ສິດ ແລະ ໜ້າທີ່ ຂອງ ປະທານຄະນະບໍລິຫານງານ**

ປະທານຄະນະບໍລິຫານງານມູນນິທິ ມີສິດ ແລະ ໜ້າທີ່ ດັ່ງນີ້

1. ຊີ້ນໍາ ການຄົ້ນຄວ້າມາດຕະການທີ່ຈໍາເປັນ ເພື່ອປະຕິບັດຈຸດປະສົງຂອງມູນນິທິ;
2. ຊີ້ນໍາ ການວາງແຜນການເຄື່ອນໄຫວ, ແຜນລາຍຮັບ ແລະ ລາຍຈ່າຍຕ່າງໆ ຂອງມູນນິທິ;
3. ພິຈາລະນາແຕ່ງຕັ້ງ ຫຼື ປົດຕໍາແໜ່ງ ຜູ້ອໍານວຍການ, ຮອງຜູ້ອໍານວຍການ, ຄະນະກວດກາ, ກໍາມະການຄະນະປະຈໍາ (ຖ້າມີ), ເລຂາທິການ, ຫົວໜ່ວຍການຈັດຕັ້ງວິຊາການຕ່າງໆ ທີ່ຂຶ້ນກັບມູນນິທິ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກໍານົດໄວ້ໃນກົດລະບຽບຂອງມູນນິທິ.

**ມາດຕາ 25. ພາລະບົດບາດ ຂອງ ຜູ້ອຳນວຍການ**

ຜູ້ອຳນວຍການມູນນິທິ ແມ່ນພົນລະເມືອງລາວ ແລະ ໄດ້ຮັບການແຕ່ງຕັ້ງຈາກ ປະທານຄະນະບໍລິຫານງານມູນນິທິ ຕາມການຕົກລົງຂອງ ຄະນະບໍລິຫານງານມູນນິທິ.

**ມາດຕາ 26. ສິດ ແລະ ໜ້າທີ່ ຂອງ ຜູ້ອຳນວຍການ**

ຜູ້ອຳນວຍການມູນນິທິ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຕາງໜ້າມູນນິທິ ພົວພັນປະສານງານ ກັບພາກສ່ວນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ;
2. ບໍລິຫານການເຄື່ອນໄຫວ ຂອງມູນນິທິ; ປະຕິບັດການໃຊ້ຈ່າຍເງິນ ຂອງມູນນິທິ ໃຫ້ຖືກຕ້ອງຕາມມະຕິຕົກລົງຂອງ ຄະນະບໍລິຫານງານມູນນິທິ ຕາມກົດລະບຽບ ແລະ ຂໍ້ກຳນົດຕ່າງໆຂອງລະບຽບກົດໝາຍທີ່ກ່ຽວຂ້ອງ;
3. ລາຍງານສະພາບການເຄື່ອນໄຫວ ຂອງມູນນິທິ ຕໍ່ຄະນະບໍລິຫານງານມູນນິທິ ແລະ ອົງການຈັດຕັ້ງລັດ ທີ່ມີສິດອະນຸມັດສ້າງຕັ້ງ ຢ່າງເປັນປົກກະຕິ.
4. ຄຸ້ມຄອງຊັບສິນມູນນິທິ ຕາມກົດລະບຽບຂອງມູນນິທິ ແລະ ຂໍ້ກຳນົດຕ່າງໆ ຕາມລະບຽບກົດໝາຍ;
5. ສະເໜີ ປະທານຄະນະບໍລິຫານງານມູນນິທິ ແຕ່ງຕັ້ງຮອງຜູ້ອຳນວຍການ ແລະ ຫົວໜ່ວຍການຈັດຕັ້ງວິຊາການຕ່າງໆ ທີ່ຂຶ້ນກັບມູນນິທິ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງມູນນິທິ.

**ມາດຕາ 27. ພາລະບົດບາດ ຂອງ ຄະນະກວດກາ**

ຄະນະກວດກາ ແມ່ນການຈັດຕັ້ງໜຶ່ງ ຊຶ່ງຖືກເລືອກຕັ້ງໂດຍຄະນະບໍລິຫານງານຂອງມູນນິທິ, ມີພາລະບົດບາດຊ່ວຍ ຄະນະບໍລິຫານງານ ກວດກາທຸກການເຄື່ອນໄຫວຂອງມູນນິທິ ເພື່ອຮັບປະກັນຄວາມຖືກຕ້ອງ ຕາມກົດລະບຽບຂອງມູນນິທິ ແລະ ລະບຽບກົດໝາຍຂອງລັດ.

**ມາດຕາ 28. ສິດ ແລະ ໜ້າທີ່ ຂອງ ຄະນະກວດກາ**

ຄະນະກວດກາ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ດຳເນີນການກວດກາເປັນປົກກະຕິ ແລະ ກວດກາໃນກໍລະນີທີ່ມີປະກົດການລະເມີດກົດລະບຽບ ຫຼື ແບບແຜນວິທີການເຄື່ອນໄຫວຂອງມູນນິທິ;
2. ກວດກາການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຈຸດປະສົງຂອງມູນນິທິ, ມະຕິຂອງກອງປະຊຸມຄະນະບໍລິຫານງານ, ມະຕິຂອງກອງປະຊຸມຄະນະປະຈຳມູນນິທິ (ຖ້າມີ);
3. ກວດກາການຄຸ້ມຄອງ, ການໃຊ້ຈ່າຍການເງິນຂອງມູນນິທິ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງມູນນິທິ.

**ມາດຕາ 29. ພາລະບົດບາດ ຂອງ ເລຂາທິການ**

ເລຂາທິການມູນນິທິ ແມ່ນຜູ້ຊ່ວຍວຽກ ປະທານຄະນະບໍລິຫານງານມູນນິທິ ຊຶ່ງໄດ້ຮັບການແຕ່ງຕັ້ງ ໂດຍປະທານຄະນະບໍລິຫານງານມູນນິທິ ຕາມການເຫັນດີຂອງ ຄະນະບໍລິຫານງານ, ມີພາລະບົດບາດບໍລິຫານວຽກງານປະຈຳວັນຂອງມູນນິທິ.

**ມາດຕາ 30. ສິດ ແລະ ໜ້າທີ່ ຂອງ ເລຂາທິການ**

ເລຂາທິການມູນນິທິ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກະກຽມເອກະສານ, ເນື້ອໃນກອງປະຊຸມຄະນະບໍລິຫານງານ;
2. ສະເໜີຄຳເຫັນ, ຄຳສະເໜີແນະ ຕໍ່ ປະທານ, ຮອງປະທານ ຄະນະບໍລິຫານງານມູນນິທິກ່ຽວກັບບັນຫາຕ່າງໆ;
3. ກະກຽມບົດສະຫຼຸບປະຈຳເດືອນ, ງວດ, ຫົກເດືອນ ແລະ ປະຈຳປີຂອງມູນນິທິ ເພື່ອລາຍງານຕໍ່ຄະນະບໍລິຫານງານ ຫຼື ຕໍ່ອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ;
4. ສ້າງເງື່ອນໄຂ, ອຳນວຍຄວາມສະດວກໃນດ້ານຕ່າງໆ ທີ່ຈຳເປັນສຳລັບການເຄື່ອນໄຫວວຽກງານ ຂອງມູນນິທິ, ຄະນະບໍລິຫານງານ, ປະທານ ແລະ ຮອງປະທານ ຄະນະບໍລິຫານງານມູນນິທິ;
5. ພົວພັນ ແລະ ປະສານງານກັບມູນນິທິອື່ນ, ອົງການຈັດຕັ້ງທີ່ກ່ຽວຂ້ອງຂອງພັກ, ລັດ ໃນນາມມູນນິທິ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງມູນນິທິ.

## ໝວດທີ VI
## ການໂຮມ, ການແຍກ, ການຍຸບເລີກ ມູນນິທິ

**ມາດຕາ 31. ການໂຮມ ແລະ ການແຍກ ມູນນິທິ**

ການໂຮມຫຼາຍມູນນິທິ ເຂົ້າກັນເປັນມູນນິທິດຽວ ຫຼື ການແຍກ ມູນນິທິໜຶ່ງອອກເປັນຫຼາຍມູນນິທິ ໃຫ້ປະຕິບັດຕາມກົດລະບຽບຂອງມູນນິທິ ບົນພື້ນຖານຄວາມຕື່ນຕົວສະໝັກໃຈຂອງມູນນິທິ ແລະ ການເຫັນດີຈາກອົງການທີ່ມີສິດອະນຸມັດສ້າງຕັ້ງ.

**ມາດຕາ 32. ການຍຸບເລີກ ມູນນິທິ**

ມູນນິທິໃດໜຶ່ງ ຈະຖືກຍຸບເລີກໃນກໍລະນີໃດໜຶ່ງ ດັ່ງນີ້:

1. ໝົດກຳນົດເວລາການເຄື່ອນໄຫວຕາມທີ່ກຳນົດໄວ້ຢູ່ໃນກົດລະບຽບຂອງມູນນິທິ;
2. ມູນນິທິ ໄດ້ບັນລຸຈຸດປະສົງທີ່ໄດ້ກຳນົດໄວ້ຢູ່ໃນກົດລະບຽບຂອງຕົນແລ້ວ;
3. ບໍ່ມີທຶນ ຫຼື ຊັບສິນ ເພື່ອເຄື່ອນໄຫວຕໍ່ໄປ;
4. ລັດມີຂໍ້ຕົກລົງໃຫ້ຍຸບເລີກເນື່ອງຈາກວ່າ:

**ກ.** ບໍ່ມີການເຄື່ອນໄຫວເປັນປະຈຳ ສິບສອງເດືອນ ຕິດຕໍ່ກັນ ແລະ ບໍ່ມີການລາຍງານ ກ່ຽວກັບສະພາບການຈັດຕັ້ງ, ການເຄື່ອນໄຫວ ແລະ ການເງິນຂອງຕົນ ໃຫ້ອົງການຈັດຕັ້ງລັດທີ່ກ່ຽວຂ້ອງຊາບ ເປັນເວລາຢ່າງໜ້ອຍ ສອງປີ ຕິດຕໍ່ກັນ;

**ຂ.** ໝົດກຳນົດເວລາເຄື່ອນໄຫວ ຫຼື ມູນນິທິໄດ້ບັນລຸຈຸດປະສົງແລ້ວ ແຕ່ມູນນິທິບໍ່ສະໝັກໃຈຍຸບເລີກດ້ວຍຕົນເອງ;

**ຄ.** ມູນນິທິ ໄດ້ລະເມີດລະບຽບກົດໝາຍຂອງລັດ ຫຼື ກົດລະບຽບຂອງມູນນິທິ ຢ່າງຮ້າຍແຮງ.

ໜ້າທີ່ ແລະ ຂອບເຂດສິດຂອງມູນນິທິທີ່ຖືກຍຸບເລີກແລ້ວ ໃຫ້ສິ້ນສຸດລົງ ນັບແຕ່ວັນອົງການທີ່ມີສິດອະນຸມັດສ້າງຕັ້ງ ໄດ້ຖອນໃບອະນຸຍາດສ້າງຕັ້ງມູນນິທິຄືນ.

ຊັບສິນຂອງມູນນິທິພາຍຫຼັງຍຸບເລີກ ໃຫ້ປະຕິບັດຕາມກົດລະບຽບຂອງມູນນິທິ ຫຼື ໂອນໃຫ້ມູນນິທິອື່ນ ທີ່ມີຈຸດປະສົງເຄື່ອນໄຫວຄ້າຍຄືກັນ ຫຼື ລັດຮັບເອົາ ເພື່ອຈັດສັນໃຫ້ ມູນນິທິອື່ນ.

**ມາດຕາ 33. ໜ້າທີ່ຂອງມູນນິທິ ເມື່ອສະໝັກໃຈຍຸບເລີກມູນນິທິ**

ຄະນະບໍລິຫານງານຂອງມູນນິທິ ກະກຽມ ແລະ ຍື່ນເອກະສານຕໍ່ອົງການທີ່ມີສິດອະນຸມັດສ້າງຕັ້ງມູນນິທິ ດັ່ງນີ້:

1. ໃບຄໍາຮ້ອງຂໍອະນຸຍາດຍຸບເລີກມູນນິທິ;
2. ມະຕິກອງປະຊຸມ ຫຼື ບົດບັນທຶກກອງປະຊຸມຕົກລົງຍຸບເລີກມູນນິທິ;
3. ບັນຊີຊັບສິນ, ໜີ້ສິນ, ລາຍຮັບ-ລາຍຈ່າຍ ແລະ ເງິນຄັງທີ່ຍັງເຫຼືອ;
4. ແຜນການຊໍາລະສະສາງແກ້ໄຂໜີ້ສິນ, ແກ້ໄຂຊັບສິນທີ່ຍັງເຫຼືອ.

**ມາດຕາ 34. ການສ້າງຕັ້ງຫ້ອງການຜູ້ຕາງໜ້າ ຫຼື ສາຂາ**

ມູນນິທິ ສາມາດສ້າງຕັ້ງຫ້ອງການຜູ້ຕາງໜ້າ ຫຼື ສາຂາຂອງຕົນ ໂດຍໄດ້ຮັບການເຫັນດີຈາກອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ.

## ໝວດທີ VII
## ການເງິນ ແລະ ຊັບສິນ ຂອງມູນນິທິ

**ມາດຕາ 35. ແຫຼ່ງລາຍຮັບ ຂອງມູນນິທິ**

ລາຍຮັບຂອງມູນນິທິ ໄດ້ມາຈາກແຫຼ່ງຕ່າງໆ ດັ່ງນີ້:

1. ເງິນບໍລິຈາກຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
2. ການຊ່ວຍເຫຼືອຂອງບຸກຄົນ ຫຼື ນິຕິບຸກຄົນ ຫຼື ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ຕາມລະບຽບກົດໝາຍ;
3. ລາຍໄດ້ຈາກການສະໜອງການບໍລິການ ຫຼື ການເຄື່ອນໄຫວອື່ນ ທີ່ຖືກຕ້ອງຕາມກົດໝາຍ;
4. ແຫຼ່ງລາຍຮັບອື່ນ ຕາມລະບຽບກົດໝາຍ;

ການຄຸ້ມຄອງລາຍຮັບ ໃຫ້ປະຕິບັດຕາມກົດລະບຽບຂອງມູນນິທິ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 36. ລາຍຈ່າຍ ຂອງມູນນິທິ**

ລາຍຈ່າຍຂອງມູນນິທິ ມີດັ່ງນີ້:

1. ສະໜັບສະໜູນແຜນງານ, ໂຄງການຕ່າງໆ ເພື່ອສາທາລະນະປະໂຫຍດ ຕາມຈຸດປະສົງ ແລະ ກົດລະບຽບຂອງມູນນິທິ ຫຼື ຕາມຈຸດປະສົງຂອງຜູ້ບໍລິຈາກ;
2. ລາຍຈ່າຍບໍລິຫານປົກກະຕິ ສູງສຸດບໍ່ໃຫ້ເກີນ ສິບສ່ວນຮ້ອຍ ຂອງແຜນລາຍຈ່າຍປະຈໍາປີຂອງມູນນິທິ;

**3.** ລາຍຈ່າຍອື່ນໆ ຕາມກົດລະບຽບຂອງມູນນິທິ.

**ມາດຕາ 37. ການໂຄສະນາເຜີຍແຜ່ ແລະ ປຸກລະດົມຂົນຂວາຍ ທຶນ ຫຼື ຊັບສິນ**

ມູນນິທິ ສາມາດຈັດຕັ້ງການໂຄສະນາເຜີຍແຜ່ ແລະ ປຸກລະດົມຂົນຂວາຍ ທຶນ ຫຼື ຊັບສິນ ຈາກສັງຄົມ ດ້ວຍຮູບການຕ່າງໆ.

ສຳລັບການໂຄສະນາເຜີຍແຜ່ ແລະ ປຸກລະດົມຂົນຂວາຍທຶນ ຫຼື ຊັບສິນດ້ວຍຮູບການ ຈັດງານ, ຈັດເວທີຊຸມນຸມ ຕ້ອງໄດ້ຮັບການເຫັນດີເປັນລາຍລັກອັກສອນຈາກ ອົງການປົກຄອງ ທ້ອງຖິ່ນທີ່ກ່ຽວຂ້ອງສາກ່ອນ.

## ໝວດທີ VIII
## ການຄຸ້ມຄອງ ແລະ ກວດກາ ມູນນິທິ

**ມາດຕາ 38. ອົງການຄຸ້ມຄອງ ມູນນິທິ**

ລັດຖະບານ ເປັນຜູ້ຄຸ້ມຄອງມູນນິທິຢ່າງລວມສູນ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ອົງການດັ່ງຕໍ່ໄປນີ້ ເປັນຜູ້ຄຸ້ມຄອງຊ່ວຍ:

**1.** ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສຳນັກງານນາຍົກລັດຖະມົນຕີ;

**2.** ກະຊວງການເງິນ;

**3.** ກະຊວງ, ຂະແໜງການຕ່າງໆ ທີ່ກ່ຽວຂ້ອງ;

**4.** ອົງການປົກຄອງແຂວງ, ນະຄອນ.

**ມາດຕາ 39. ສິດ ແລະ ໜ້າທີ່ ຂອງ ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສຳນັກງານນາຍົກ ລັດຖະມົນຕີ**

ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສຳນັກງານນາຍົກລັດຖະມົນຕີ ມີສິດ ແລະ ໜ້າທີ່ ດັ່ງນີ້:

**1.** ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າຮ່າງ ແລະ ສະເໜີຕໍ່ ຂັ້ນເທິງ ພິຈາລະນາປະກາດໃຊ້ ບັນດານະໂຍບາຍ ແລະ ກົດໝາຍ ກ່ຽວກັບມູນນິທິ;

**2.** ໂຄສະນາເຜີຍແຜ່, ແນະນຳຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ລະບຽບກົດໝາຍ ກ່ຽວກັບມູນນິທິ;

**3.** ຄົ້ນຄວ້າ, ພິຈາລະນາອະນຸມັດການສ້າງຕັ້ງ, ຮັບຮອງເອົາການໂຮມ, ການແຍກ ຫຼື ການຍຸບເລີກ ມູນນິທິທີ່ກຳນົດໃນມາດຕາ **9** ຂອງດຳລັດສະບັບນີ້;

**4.** ຕິດຕາມ, ກວດກາ, ກວດການ ການຈັດຕັ້ງ, ການເຄື່ອນໄຫວ ຂອງມູນນິທິ ທີ່ກຳນົດໃນ ມາດຕາ **9** ຂອງດຳລັດສະບັບນີ້;

**5.** ແນະນຳບັນດາກະຊວງ, ອົງການທຽບເທົ່າຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນຂັ້ນ ແຂວງ ແລະ ຂັ້ນເມືອງກ່ຽວກັບວຽກງານການຄຸ້ມຄອງ, ກວດກາການເຄື່ອນໄຫວ ຂອງມູນນິທິ;

**6.** ຄົ້ນຄວ້າພິຈາລະນາແກ້ໄຂຄຳຮ້ອງຟ້ອງ, ຄຳຮ້ອງທຸກ ແລະ ຄຳສະເໜີຕ່າງໆ ຕາມຂອບ ເຂດສິດຂອງຕົນ.

**ມາດຕາ 40. ສິດ ແລະ ໜ້າທີ່ ຂອງ ກະຊວງການເງິນ**

ກະຊວງການເງິນ ມີສິດ ແລະ ໜ້າທີ່ກ່ຽວກັບການຄຸ້ມຄອງມູນນິທິ ດັ່ງນີ້:

1. ເປັນເຈົ້າການປະສານສົມທົບກັບບັນດາອົງການທີ່ກ່ຽວຂ້ອງ ເພື່ອອອກລະບຽບການກ່ຽວກັບການຄຸ້ມຄອງການເງິນຂອງມູນນິທິ ແລະ ແນະນຳອົງການ ການເງິນທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດ;
2. ຈັດຕັ້ງການກວດກາ, ກວດການ, ຄວບຄຸມການເຄື່ອນໄຫວການເງິນຂອງມູນນິທິ; ແກ້ໄຂຄຳຮ້ອງຟ້ອງ, ຄຳຮ້ອງທຸກ, ການລະເມີດວິໄນການເງິນ.

**ມາດຕາ 41. ສິດ ແລະ ໜ້າທີ່ ຂອງ ກະຊວງ, ຂະແໜງການ**

ກະຊວງ, ຂະແໜງການ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າປະກອບຄຳເຫັນ ຕໍ່ການສະເໜີຂໍອະນຸມັດສ້າງຕັ້ງ, ໂຮມ, ແຍກ ແລະ ຍຸບເລີກມູນນິທິທີ່ພົວພັນກັບຂົງເຂດ, ຂະແໜງການທີ່ຕົນຮັບຜິດຊອບຄຸ້ມຄອງ;
2. ໂຄສະນາເຜີຍແຜ່, ແນະນຳຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງກັບວຽກງານຂອງຕົນ ໃຫ້ມູນນິທິ;
3. ແນະນຳ, ອຳນວຍຄວາມສະດວກ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງມູນນິທິ ເພື່ອເຮັດໃຫ້ມູນນິທິ ເຄື່ອນໄຫວຖືກຕ້ອງຕາມຈຸດປະສົງ ແລະ ພາລະບົດບາດຂອງມູນນິທິ;
4. ສະເໜີອົງການທີ່ມີສິດອະນຸມັດສ້າງຕັ້ງ ຫຼື ລັດຖະບານ ເພື່ອໃຫ້ການຍ້ອງຍໍມູນນິທິທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນພັດທະນາ ແລະ ຊ່ວຍເຫຼືອສັງຄົມທີ່ພົວພັນກັບຂະແໜງການຕົນ.

**ມາດຕາ 42. ສິດ ແລະ ໜ້າທີ່ ຂອງ ອົງການປົກຄອງແຂວງ, ນະຄອນ**

ອົງການປົກຄອງແຂວງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າອະນຸມັດການສ້າງຕັ້ງ, ຮັບຮອງເອົາ ການໂຮມ, ການແຍກ ຫຼື ການຍຸບເລີກມູນນິທິທີ່ກຳນົດໄວ້ຢູ່ໃນມາດຕາ **10** ແລະ **11** ຂອງດຳລັດສະບັບນີ້;
2. ໂຄສະນາເຜີຍແຜ່, ແນະນຳຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ລະບຽບກົດໝາຍກ່ຽວກັບມູນນິທິ;
3. ແນະນຳ, ອຳນວຍຄວາມສະດວກ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວຂອງມູນນິທິ ໃຫ້ມີປະສິດທິຜົນ ແລະ ຖືກຕ້ອງຕາມຈຸດປະສົງ ແລະ ພາລະບົດບາດຂອງມູນນິທິ;
4. ຄົ້ນຄວ້າພິຈາລະນາແກ້ໄຂຄຳຮ້ອງຟ້ອງ, ຄຳຮ້ອງທຸກ ແລະ ຄຳສະເໜີຕ່າງໆ ຕາມຂອບເຂດສິດຂອງຕົນ;
5. ໃຫ້ການຍ້ອງຍໍ ຫຼື ສະເໜີອົງການທີ່ມີສິດອຳນາດຂອງລັດ ໃຫ້ການຍ້ອງຍໍມູນນິທິທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນພັດທະນາ ແລະ ຊ່ວຍເຫຼືອສັງຄົມ ທີ່ພົວພັນກັບທ້ອງຖິ່ນຂອງຕົນ.

**ມາດຕາ 43. ການປະສານງານ**

ການປະສານງານລະຫວ່າງ ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ ໃຫ້ປະຕິບັດ ດັ່ງນີ້:

1. ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ພົວພັນປະສານງານກັບບັນດາກະຊວງ, ຂະແໜງການທີ່ກ່ຽວຂ້ອງກ່ອນອະນຸມັດສ້າງຕັ້ງ, ຮັບຮອງການໂຮມ, ການແຍກ ແລະ ການຍຸບເລີກມູນນິທິ ທີ່ກຳນົດໃນມາດຕາ **9** ຂອງດຳລັດສະບັບນີ້;
2. ກະຊວງ, ຂະແໜງການທີ່ກ່ຽວຂ້ອງ ແຈ້ງສະພາບການເຄື່ອນໄຫວຂອງມູນນິທິ ທີ່ເຄື່ອນໄຫວໃນຂົງເຂດ, ຂະແໜງການຂອງຕົນເອງ ໃຫ້ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນຊາບ;
3. ອົງການປົກຄອງແຂວງ, ນະຄອນ ພົວພັນປະສານງານກັບຂະແໜງການຕ່າງໆ ທີ່ກ່ຽວຂ້ອງຢູ່ຂັ້ນແຂວງ ກ່ອນອະນຸມັດສ້າງຕັ້ງ, ຮັບຮອງການໂຮມ, ການແຍກ ແລະ ການຍຸບເລີກມູນນິທິທີ່ກຳນົດໃນມາດຕາ **10** ແລະ **11** ຂອງດຳລັດສະບັບນີ້;
4. ພະແນກການທີ່ກ່ຽວຂ້ອງ ແຈ້ງສະພາບການເຄື່ອນໄຫວຂອງມູນນິທິ ທີ່ເຄື່ອນໄຫວໃນຂົງເຂດວຽກງານຂອງຕົນເອງ ໃຫ້ອົງການປົກຄອງທ້ອງຖິ່ນຊາບ.

### ມາດຕາ 44. ອົງການກວດກາ ມູນນິທິ

ອົງການທີ່ມີສິດກວດກາມູນນິທິ ປະກອບມີ:

1. ອົງການຄຸ້ມຄອງມູນນິທິ ຕາມມາດຕາ **38** ຂອງດຳລັດສະບັບນີ້;
2. ອົງການກວດສອບເອກະລາດ;
3. ອົງການກວດສອບແຫ່ງລັດ.

### ມາດຕາ 45. ການກວດກາ ມູນນິທິ

ອົງການກວດກາມູນນິທິ ມີໜ້າທີ່ກວດກາການຈັດຕັ້ງ ແລະ ການເຄື່ອນໄຫວຂອງມູນນິທິ ຕາມຂອບເຂດສິດຂອງຕົນ ດັ່ງນີ້:

1. ກວດກາປະຫວັດຫຍໍ້ຂອງຜູ້ລິເລີ່ມກໍ່ຕັ້ງ, ຄະນະຜູ້ລິເລີ່ມກໍ່ຕັ້ງ, ຜູ້ອຳນວຍການ ແລະ ປະທານຄະນະບໍລິຫານງານມູນນິທິ;
2. ກວດກາຈຸດປະສົງຂອງມູນນິທິ ທີ່ໄດ້ລະບຸໄວ້ໃນກົດລະບຽບຂອງມູນນິທິ;
3. ກວດກາບົດລາຍງານປະຈຳປີ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງມູນນິທິ;
4. ກວດກາບົດລາຍງານປະຈຳປີ ກ່ຽວກັບລາຍຮັບ-ລາຍຈ່າຍການເງິນຂອງມູນນິທິ;
5. ກວດກາປະກົດການລະເມີດກົດລະບຽບຂອງມູນນິທິ ແລະ ລະບຽບກົດໝາຍ.

## ໝວດທີ IX
## ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ

### ມາດຕາ 46. ນະໂຍບາຍ ຕໍ່ຜູ້ມີຜົນງານ

ມູນນິທິທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນສ້າງຄຸນປະໂຫຍດ ແລະ ຄຸນງາມຄວາມດີໃຫ້ແກ່ສັງຄົມ ແລະ ປະເທດຊາດຈະໄດ້ຮັບການຍ້ອງຍໍສັນລະເສີນດ້ວຍຮູບການຕ່າງໆ ຕາມນະໂຍບາຍຂອງລັດ.

**ມາດຕາ 47. ມາດຕະການຕໍ່ຜູ້ລະເມີດ**

ມູນນິທິ ຫາກໄດ້ລະເມີດດຳລັດສະບັບນີ້ ຫຼື ລະບຽບກົດໝາຍອື່ນໆ ທີ່ກ່ຽວຂ້ອງກັບມູນນິທິ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ ຫຼື ດຳເນີນຄະດີ ຕາມສະຖານເບົາ ຫຼື ໜັກ.

## ໝວດທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 48. ການຈັດຕັ້ງປະຕິບັດ**

ບັນດາກະຊວງ, ອົງການຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງສັງຄົມພາຍໃນປະເທດ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ຢ່າງເຂັ້ມງວດ.

ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສຳນັກງານນາຍົກລັດຖະມົນຕີ ມີໜ້າທີ່ຮັບຜິດຊອບຈັດຕັ້ງປະຕິບັດ ແລະ ໃຫ້ອອກຄຳແນະນຳລະອຽດຕື່ມ ເພື່ອຜັນຂະຫຍາຍເນື້ອໃນດຳລັດສະບັບນີ້.

**ມາດຕາ 49. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫຼັງເກົ້າສິບວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ບັນດາມູນນິທິທີ່ໄດ້ສ້າງຕັ້ງ ແລະ ເຄື່ອນໄຫວມາກ່ອນການໃຊ້ດຳລັດສະບັບນີ້ ໃຫ້ປະກອບສຳນວນເອກະສານຄົບຖ້ວນຕາມກຳນົດໄວ້ໃນມາດຕາ **13** ຂອງດຳລັດສະບັບນີ້ແລ້ວຍື່ນ ຕໍ່ອົງການທີ່ມີສິດອະນຸມັດສ້າງຕັ້ງມູນນິທິ ຕາມທີ່ກຳນົດໄວ້ໃນ ມາດຕາ **38 ຂໍ້ 1** ແລະ **38 ຂໍ້ 4** ຂອງດຳລັດສະບັບນີ້ ເພື່ອຂໍອະນຸມັດສ້າງຕັ້ງຄືນໃໝ່ພາຍໃນກຳນົດເວລາຫົກສິບວັນ ນັບແຕ່ວັນດຳລັດສະບັບນີ້ມີຜົນສັກສິດເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ທອງສິງ ທຳມະວົງ